ແຜນງານບົດວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

Basic Education Quality and Access in Lao PDR







## MoES and Australia strengthen school-based teacher support through joint planning and evidence-led learning

## Media Report

**30 April – 23 June 2026**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ ແລະ ລັດຖະບານສະຫະລັດອາເມລິກາ
Basic Education Quality and Access in Lao PDR is managed by Tetra Tech International Development on behalf of the Australian Government and United States Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2026-04-03 | Newspaper | Vientiane Times | page 3 |
| 2026-04-02 | Newspaper | Pathedlao | Front and page 4 |
| 2026-04-03 | Newspaper | Pasaxon | Page 10 |
| 2026-04-03 | Newspaper | Vientiane Mai | Page 8 |
| 2026-06-25 | Newspaper | Vientiane Mai | Page 2 |
| 2026-05-25 | Social media | Luang Namtha Teacher Training College Facebook | 1.4K Followers |
| 2026-04-01 | Social media | Pathedlao Facebook | 394K Followers |
| 2026-06-23 | Social media | Pathedlao Facebook | 394K Followers |
| 2026-04-01 | Social media | Education Science and Sport News Facebook | 754 Followers |
| 2026-05-21 | Social media | Vientiane Radio FM 105.5 Facebook | 102K Followers |
| 2026-04-03 | Social media | Edu-Sport TV online Facebook | 82K Followers |
| 2026-03-31 | Social media | Vientiane Mai Facebook | 50K Followers |
| 2026-04-30 | Social media | Savannakhet Radio Facebook | 25K Followers |
| 2026-04-01 | Social media | Edu-Radio Online Facebook (new MoES page just opened) | 23 Followers |
| 2026-03-31 | Social media | Economic and Commerce Facebook | 763K Followers |
| 2026-04-29 | Social media | The Information and Media Center Facebook | 11K Followers |
| 2026-04-01 | Social media | Lao Security News Facebook | 178K Followers |
| 2026-04-01 | Social media | Laos News – KPL Facebook | 15K Followers |
| 2026-04-01 | Social media | Pasaxon Facebook | 34K Followers |
| 2026-04-01 | Social media | PESS VTE Province Facebook | 18K Followers |
| 2026-04-01 | Social media | Lao PS TV Facebook | 18K Followers |
| 2026-04-01 | Social media | Lao National TV YouTube | 141K Followers |
| 2026-04-01 | Social media | Lao Army Radio Facebook | 40K Followers |
| 2026-04-27 | Social media | Xiangkhouang Mixay Newspaper Facebook | 9.6K Followers |
| 2026-05-22 | Social media | Kangkhai TTC Facebook | 1,4K Followers |
| 2026-04-03 | Website | BEQUAL | Read article in English here<br>Read article in Lao here |
| 2026-06-23 | Website | Educationnews.la | Read article in Lao here |
| 2026-04-03 | Website | moes.edu.la | Read article in Lao here |
| 2026-04-22 | Website | KPL English | Read article in English here |
| 2026-04-03 | Radio | Savannakhet Radio FM 100.7 MHz | |
| 2026-04-02 | Radio | Vientiane Radio FM 105.5 | |

| | | | |
|---|---|---|---|
| 2026-04-02 | Radio | Public Security Radio FM 101.5 | |
| 2026-04-29 | Radio | Education news FM 103.7 MHZ | |
| 2026-04-03 | TV | Lao ESTV | Watch the TV news here |
| 2026-04-02 | TV | VTE 9 | Watch the TV news here |
| 2026-04-02 | TV | Lao PS TV | Watch the TV news here |
| 2026-04-01 | TV | Lao National TV | Watch the TV news here |
| 2026-04-03 | TV | LATV | No link only TV |
| 2026-04-03 | WhatsApp and Facebook | Nationwide Master and Provincial Trainers | 19 groups (per province) 706 members |
| 2026-04-03 | WhatsApp | Nationwide 18 PESS- 148 DESB (management and technical staff) | 18 groups (per province) 442 members |
| 2026-04-03 | WhatsApp | Nationwide 18 PESS in charge of grants (teacher dev, finance, general education) | 1 group<br>43 members |
| 2026-04-03 | WhatsApp | Nationwide TTC (director and technical staff) | 1 group<br>26 members |
| 2026-04-03 | WhatsApp | Phase 2 Target PESS and DESB (teacher dev units and coordinator) | 3 groups (per TTC catchment areas)<br>105 members |
| 2026-04-03 | WhatsApp | Phase 2 Target TTC CPD coordinators | 3 groups (per TTC)<br>161 members |
| 2026-04-03 | WhatsApp | Phase 2 Internal Pedagogical support | 30 groups (per district)<br>1,127 members |
| 2026-04-03 | WhatsApp | Phase 1 Target PESS and DESB in charge of monitoring (teacher dev, monitoring, finance) | 5 groups (per province)<br>127 members |

## Pictures of articles in the media

| 2026-04-03 | Newspaper | Vientiane Times | page 3 |
|---|---|---|---|

# Teachers make progress through hands-on classroom support

Times Reporters

The governments of Laos and Australia are continuing to improve school-based teacher support through joint planning and evidence-led learning.

The Ministry of Education and Sports, in collaboration with the Australian government through the Basic Education Quality and Access in Laos (BEQUAL) programme, on Tuesday hosted the "TTC-PESS Bi-Annual Meeting" in Vientiane.

The meeting discussed the school-based continuing professional development (CPD) system, with participants sharing lessons from recent implementation and preparing detailed plans for the next two and a half years as BEQUAL moves into its Phase 2 extension.



Deputy Director General of the Department of Teacher Education, Mr Phetmany Silathmina.

Deputy Director General of the Department of Teacher Education, Mr Phetmany Silathmina, said "With the support of the Australian government, we have established a school-based continuing professional development system that is relevant to teachers' needs, systematic, flexible, and inclusive of stakeholders at all levels."

The first Internal Pedagogical Support teams were selected in March 2023 to provide teachers with regular, classroom-focused support across 30 target districts in seven provinces.

Meeting participants reviewed progress made to date and shared lessons learnt during the first term of the 2025-26 school year, agreeing on practical steps to scale up and strengthen implementation over the next two and a half years.

Team Leader of BEQUAL, representing the Australian Embassy, Ms Rebecca McHugh, said "In the face of teacher shortages and declining enrolment in some areas, sustained professional support is key to upskilling teachers and improving learning."

The programme emphasises local relevance, in which training and resources are adjusted to match the challenges teachers actually face in their classrooms, including multilingual settings and diverse learner needs.

Australia values the close collaboration with the education ministry to make this happen, Ms McHugh said.

Presentations delivered at the meeting indicated that teachers report greater confidence, classroom observations indicate improved teaching practices, and schools are seeing stronger student participation and socio-emotional learning after regular continuing professional development activities.

The new CPD system has helped expand professional learning. In the first semester of 2025-26, across the 30 BEQUAL target districts, Internal Pedagogical Support teams led 33,609 CPD activities and provided assistance to 6,930 primary teachers.

Importantly, many development partners are supporting the CPD approach, signalling momentum in nationwide scale-up that does not rely solely on Australian funding.

Participants also discussed Phase 2 extension priorities, including strengthened research and learning and a stronger focus on gender equality and women's advancement.

The TTC-PESS annual work plan for 2026-2027 was endorsed and detailed plans for April-September were finalised.

| 2026-04-02 | Newspaper | Pathedlao | Front and page 3 |
|---|---|---|---|





| 2026-04-03 | Newspaper | Vientiane Mai | Page 8 |
|---|---|---|---|



ສຶກສາ

# ລະບົບ CPD ສ້າງຜົນງານໂດດເດັ່ນ ໃນການຍົກລະດັບຄຸນນະພາບຂອງຄູລາວ

● ການພັດທະນາຄູສອນໃຫ້ມີຄວາມຮູ້ ແລະ ທັກສະທັນສະໄໝ ຖືເປັນປັດໄຈສຳຄັນໃນການຍົກລະດັບຄຸນນະພາບການສຶກສາຂອງຊາດ ດ້ວຍເຫດນັ້ນ ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ (BEQUAL) ໄດ້ຈັດກອງປະຊຸມປະຈຳ 6 ເດືອນ ຮ່ວມກັບວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ເພື່ອທົບທວນ ແລະ ປະເມີນຜົນການດຳເນີນງານ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໃນຂັ້ນໂຮງຮຽນ ພ້ອມວາງແຜນຂະຫຍາຍຜົນໃນອະນາຄົດ.

ກອງປະຊຸມດັ່ງກ່າວ ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໂດຍມີ ທ່ານ ເພັດມະນີ ສີລັດມີນາ ຮອງຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ ພ້ອມຜູ້ແທນເຂົ້າຮ່ວມຈຳນວນ 86 ທ່ານ ຈາກບັນດາກົມກອງຂອງ ສສກ ສະຖານທູດອົດສະຕຣາລີ ຄູ່ຮ່ວມພັດທະນາ ແລະ ທີມງານແຜນງານບີຄວາ ຕົວເລກສະທ້ອນຜົນສຳເລັດທີ່ຈັບຕ້ອງໄດ້ ໃນພາກຮຽນທຳອິດ ຂອງສົກຮຽນ 2025-2026 ການນຳໃຊ້ລະບົບ CPD ໃໝ່ ຂອງ ສສກ ໄດ້ສ້າງຜົນງານຢ່າງໂດດເດັ່ນໃນ 30 ເມືອງເປົ້າໝາຍ ຂອງ 7 ແຂວງ ໂດຍມີການຈັດກິດຈະກຳພັດທະນາຄູທັງໝົດ 33.609 ຄັ້ງ ແລະ ມີຄູເຂົ້າຮ່ວມ 6.930 ຄົນ ໃນນັ້ນ 56% ເປັນເພດຍິງ.

ນອກຈາກນີ້ ທີມງານສຶກສານິເທດພາຍໃນ ໄດ້ຮັບການຕິດຕາມ ແລະ ຊ່ວຍເຫຼືອຈາກວິທະຍາໄລຄູ ແລະ ຫ້ອງການ ສກມ ຈຳນວນ 9.728 ຄັ້ງ ພ້ອມມີການເຂົ້າສັງເກດການສອນໃນຫ້ອງຮຽນຕົວຈິງເຖິງ 1.699 ຄັ້ງ ຜົນການປະເມີນຊີ້ໃຫ້ເຫັນວ່າ ຄູສອນມີຄວາມໝັ້ນໃຈໃນການຈັດການຮຽນ-ການສອນ ຫຼາຍຂຶ້ນ ສາມາດປັບວິທີການສອນໃຫ້ສອດຄ່ອງກັບຄວາມຫຼາກຫຼາຍດ້ານພາສາ ແລະ ຄວາມຕ້ອງການຂອງນັກຮຽນ ສິ່ງນີ້ໄດ້ສົ່ງຜົນໃຫ້ນັກຮຽນມີສ່ວນຮ່ວມໃນຫ້ອງຮຽນຫຼາຍຂຶ້ນ ແລະ ມີພັດທະນາການດ້ານສັງຄົມ-ອາລົມທີ່ເຂັ້ມແຂງຂຶ້ນ.

ທ່ານ ເພັດມະນີ ສີລັດມີນາ ກ່າວຕື່ມວ່າ: ລະບົບ CPD ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ມີຄວາມຍືດຍຸ່ນ ແລະ ຕອບສະໜອງຕໍ່ຄວາມຕ້ອງການຕົວຈິງຂອງຄູ ການພັດທະນາຄູຢ່າງຕໍ່ເນື່ອງ ຊ່ວຍໃຫ້ຄູສາມາດເຊື່ອມໂຍງບົດຮຽນເຂົ້າກັບຊີວິດຈິງຂອງເດັກນ້ອຍ ແລະ ປັບປຸງການສອນໃຫ້ດີຂຶ້ນຢ່າງຕໍ່ເນື່ອງ ທ່ານຍັງເນັ້ນວ່າ ບາດກ້າວຕໍ່ໄປຂອງກະຊວງ ແມ່ນການຂະຫຍາຍຜົນສຳເລັດຈາກພື້ນທີ່ເປົ້າໝາຍ ໄປສູ່ການນຳໃຊ້ລະບົບ CPD ຢ່າງກວ້າງຂວາງໃນທົ່ວປະເທດ.

ທ່ານນາງ ເຣເບັກກ້າ ແມັກຮິວ (Rebecca McHugh) ຫົວໜ້າທີມແຜນງານບີຄວາ ຕາງໜ້າສະຖານທູດອົດສະຕຣາລີ ກ່າວເຖິງການສືບຕໍ່ສະໜັບສະໜູນການສຶກສາລາວ ໃຫ້ຮູ້ວ່າ: ທ່າມກາງສະພາບການຂາດແຄນຄູໃນຫຼາຍພື້ນທີ່ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແມ່ນກຸນແຈສຳຄັນທີ່ຊ່ວຍຍົກລະດັບທັກສະຂອງຄູ ແລະ ປັບປຸງຜົນການຮຽນຂອງນັກຮຽນ ໂດຍສະເພາະ ໃນເຂດຫ່າງໄກ ແລະ ດອຍໂອ ພາກລັດຖະບານອົດສະຕຣາລີ ພູມໃຈທີ່ໄດ້ຮ່ວມເປັນຄູ່ຮ່ວມພັດທະນາກັບ ສສກ ໃນການສ້າງລະບົບພັດທະນາຄູທີ່ມີປະສິດທິຜົນ ແລະ ຍືນຍົງ.

ຜົນສຳເລັດຂອງການດຳເນີນງານໃນໄລຍະຜ່ານມາ ໄດ້ນຳໄປສູ່ການຮັບຮອງແຜນວຽກປະຈຳປີ 2026-2027 ຂອງພະແນກສຶກສາທິການ ແລະ ກິລາແຂວງ ແລະ ວິທະຍາໄລຄູ ພ້ອມອະນຸມັດແຜນລາຍລະອຽດສຳລັບໄລຍະເດືອນເມສາ-ກັນຍາ 2026 ເຊິ່ງເປັນຈຸດເລີ່ມຕົ້ນຂອງການຂະຫຍາຍໄລຍະທີ 2 ຂອງແຜນງານບີຄວາ ອີກ 2 ປີເຄິ່ງ ແຜນງານໃໝ່ຈະໃຫ້ຄວາມສຳຄັນຕໍ່ຄວາມສະເໝີພາບ ຍິງ-ຊາຍ ການສົ່ງເສີມບົດບາດຂອງແມ່ຍິງໃນຂະແໜງການສຶກສາ ການຜະລິດສື່ ແລະ ວິດີໂອສຳລັບພັດທະນາຄູ ການວິໄຈ ແລະ ການເກັບກຳຂໍ້ມູນ CPD ຢ່າງເປັນລະບົບ ພ້ອມທັງສ້າງການປະສານງານກັບຄູ່ຮ່ວມພັດທະນາເພື່ອຂະຫຍາຍລະບົບ CPD ໃຫ້ຄອບຄຸມທົ່ວປະເທດ.

ຜົນການດຳເນີນງານຂອງລະບົບ CPD ໃນສົກຮຽນ 2025-2026 ສະທ້ອນໃຫ້ເຫັນວ່າ ການລົງທຶນໃນການພັດທະນາຄູ ເປັນການລົງທຶນໃນອະນາຄົດຂອງເດັກນ້ອຍ ແລະ ຂອງຊາດ ດ້ວຍຜົນງານທີ່ຈັບຕ້ອງໄດ້ ກວ່າ 6.900 ຄູ ແລະ ຫຼາຍໝື່ນກິດຈະກຳພັດທະນາວິຊາຊີບ ລະບົບ CPD ກຳລັງກາຍເປັນກົນໄກສຳຄັນໃນການຍົກລະດັບຄຸນນະພາບຄູສອນ ແລະ ການສຶກສາຂອງລາວ ເພື່ອກ້າວໄປສູ່ລະບົບການຮຽນຮູ້ທີ່ມີຄຸນນະພາບ ແລະ ທົ່ວເຖິງຫຼາຍຍິ່ງຂຶ້ນໃນອະນາຄົດ.

ນຳສະເໜີໂດຍ: ແວ່ນຂາວ

| 2026-05-25 | Luang Namtha Teacher Training College Facebook |
|---|---|




**ວິທະຍາໄລຄູ ຫຼວງນໍ້າທາ** is with **Hengthong Chomsaetuon** and **18 others**.
16m ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງດ້ານການສະໜັບສະໜູນຄູ ໃນໂຮງຮຽນຜ່ານການວາງແຜນຮ່ວມກັນ ແລະ ການຮຽນຮູ້ຜ່ານຂໍ້ມູນທີ່ເກັບກຳໄດ້.
****************... **See more**

| 2026-04-01<br><br>2026-06-23 | Pathedlao Facebook |
|---|---|

ປະເທດລາວ Pathedlao
April 1 at 3:23 PM ·

ສ້າງຄວາມເຂັ້ມແຂງໃຫ້ຄູ ຜ່ານການວາງແຜນ
ຮ່ວມກັນ ແລະ ການຮຽນຮູ້ຜ່ານຂໍ້ມູນ ທີ່ເກັບກຳໄດ້

ຂປລ. ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ໂດຍຜ່ານແຜນປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບ ການສຶກສາຂັ້ນພື້ນຖານ (ແຜນງານບີຄວາ) ຈັດກອງປະຊຸມປະຈຳ 6 ເດືອນ ລະຫວ່າງ ວິທະຍາໄລຄູ(ວຄ) ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ (ສກຂ) ຄັ້ງທີ I ໃນວັນທີ 31 ມີນາ 2026 ຢູ່ ນະຄອນຫລວງວຽງຈັນ ໂດຍມີຜູ້ຕາງໜ້າຈາກກົມສ້າງຄູ, ກົມສາມັນສຶກສາ, ກົມແຜນການ, ພະແນກຄວາມກ້າວໜ້າຂອງ ແມ່ຍິງ, ແມ່ ແລະ ເດັກ, ສະຖານທູດອົດສະຕຣາລີ, ຄູ່ຮ່ວມພັດທະນາ, ສກຂ, ວຄ ແລະ ທີມງານແຜນງານບີຄວາ ເຂົ້າຮ່ວມ, ຊຶ່ງກອງປະຊຸມຍົກໃຫ້ເຫັນ ກ່ຽວກັບລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໃນຂັ້ນໂຮງຮຽນ ໂດຍຜູ້ເຂົ້າຮ່ວມ ໄດ້ແລກປ່ຽນບົດຮຽນ ຈາກການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ການກະກຽມ ແຜນການລະອຽດສຳລັບສອງປີເຄິ່ງ ໃນຕໍ່ໜ້າ ເມື່ອແຜນງານບີຄວາ ຂະຫຍາຍເວລາໄລ ຍະທີ II.
ທ່ານ ເພັດມະນີ ສີວັດມີນາ ຮອງຫົວໜ້າກົມສ້າງຄູ, ກະຊວງ ສສກ ໄດ້ກ່າວວ່າ: ດ້ວຍການສະໜັບສະໜູນຈາກລັດຖະບານ ອົດສະຕຣາລີ, ພວກເຮົາໄດ້ສ້າງຕັ້ງລະບົບ CPD ໃນໂຮງຮຽນທີ່ສອດ ຄ່ອງກັບຄວາມຕ້ອງການຂອງຄູ, ມີລະບົບທີ່ດີ, ມີ ຄວາມສາມາດປັບໂຕໄດ້ ແລະ ການມີສ່ວນຮ່ວມ ໃນທຸກລະດັບ. ທີມງານຜູ້ເຮັດວຽກສຶກສານິເທດພາຍໃນ ທີມທຳອິດ ໄດ້ ຖືກຄັດເລືອກໃນເດືອນມີນາ 2023 ເພື່ອໃຫ້ຄູໄດ້ຮັບການຊ່ວຍເຫລືອຢ່າງເປັນປະຈຳ ໂດຍເນັ້ນໂຮງຮຽນໃນ 30 ເມືອງ ເປົ້າໝາຍ ໃນ 7 ແຂວງ. ພາຍໃຕ້ການນຳພາຂອງກົມສ້າງຄູ, ບັນດາ ວຄ ໄດ້ອຳນວຍຄວາມສະດວກໃນການສ້າງ ຂີດຄວາມ ສາມາດ, ໃນຂະນະທີ່ຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ໄດ້ນຳພາການ ປະເມີນຄວາມຕ້ອງການ ແລະ ການ ຕິດຕາມກວດກາ. ກອງປະຊຸມຄັ້ງນີ້, ກໍເພື່ອທົບທວນຄືນເຖິງຄວາມຄືບໜ້າ, ແບ່ງປັນບົດຮຽນຈາກພາກຮຽນທີ 1 ຂອງປີ ຮຽນ 2025-2026 ແລະ ຕົກລົງເປັນ ເອກະພາບກັນກ່ຽວກັບຂັ້ນຕອນການປະຕິບັດຕົວຈິງ ເພື່ອຂະຫຍາຍ ແລະ ເສີມສ້າງ ການຈັດຕັ້ງປະຕິບັດ ໃນໄລຍະສອງປີເຄິ່ງໃນຕໍ່ໜ້າ.
ທ່ານ ນາງ ເຣເບັກກາ ແມັກຣິວ ຫົວໜ້າທີມແຜນງານບີຄວາ ຕາງໜ້າໃຫ້ແກ່ສະຖານທູດອົດສະຕຣາລີ ໄດ້ກ່າວວ່າ: ໃນ ຂະນະທີ່ ສປປ ລາວ ຍັງພະເຊີນກັບສະພາບການຂາດແຄນຄູ ແລະ ການຫລຸດລົງຂອງອັດເຂົ້າຮຽນໃນບາງຂົງເຂດ ຊຶ່ງການ ສະໜັບສະໜູນດ້ານວິຊາຊີບຢ່າງຕໍ່ເນື່ອງ ແມ່ນກະ ແຈສຳຄັນ ໃນການຍົກລະດັບທັກສະຂອງຄູ ແລະ ປັບປຸງການຮຽນຂອງ ນັກຮຽນ. ຜ່ານລະບົບ CPD, ກະຊວງ ສສກ ແລະ ຄູ່ຮ່ວມງານກຳລັງສະໜັບສະໜູນຄູຫລາຍພັນຄົນ ໃນເຂດທີ່ດ້ອຍໂອກາດ ໂດຍການເຂົ້າເຖິງຄຳແນະນຳໄດ້ຢ່າງເປັນປະຈຳ, ການລົງຕິດຕາມໂຮງຮຽນ, ການຮ່ວມໂມງສອນ, ຮັບຟັງການຖອດຖອນ ບົດຮຽນ ແລະ ການຊີ້ນຳຕິດຕາມ ຊຶ່ງຮູບແບບດັ່ງກ່າວ, ເນັ້ນໜັກເຖິງການມີສ່ວນຮ່ວມຂອງຂັ້ນທ້ອງຖິ່ນເຊັ່ນ: ການຮ່ວມ ຝຶກອົບຮົມ ແລະ ອຸປະກອນໃນການຮຽນ-ການສອນຕ່າງໆ ໄດ້ຖືກປັບປຸງໃຫ້ກົງກັບສິ່ງທ້າທາຍ ທີ່ຄູພະເຊີນຢູ່ໃນຫ້ອງຮຽນ ຂອງເຂົາເຈົ້າ ລວມທັງໃຫ້ແທດເໝາະກັບສະຖານທີ່ ທີ່ມີຄວາມຫລາກຫລາຍດ້ານພາສາ ແລະ ບ່ອນທີ່ມີນັກຮຽນ ທີ່ມີຄວາມ ຕ້ອງການທີ່ຫລາກຫລາຍ. ລັດຖະບານອົດສະຕຣາລີ ເຫັນຄຸນຄ່າເຖິງການຮ່ວມມືຢ່າງໃກ້ຊິດ ກັບກະຊວງສຶກສາທິການ ແລະ ກິລາ ເພື່ອປັບປຸງໃຫ້ສິ່ງເຫລົ່ານີ້ເກີດຂຶ້ນໄດ້.
ລະບົບ CPD ໃໝ່ຂອງ ສສກ ໄດ້ຊ່ວຍສົ່ງເສີມການຮຽນຮູ້ຂອງຄູ ໃຫ້ເປັນມືອາຊີບຄື: ໃນພາກຮຽນ ທຳອິດຂອງປີ 2025-2026, ໃນ 30 ເມືອງເປົ້າໝາຍຂອງແຜນງານບີຄວາ, ທີມງານຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ອຳນວຍຄວາມສະດວກ ໃຫ້ແກ່ກິດຈະກຳ CPD ຈຳນວນ 33.609 ຄັ້ງ ແລະ ໄດ້ສະໜັບສະໜູນຄູສອນຊັ້ນປະຖົມ 6.930 ຄົນ (56% ເປັນເພດຍິງ); ຜູ້ເຮັດວຽກສຶກສານິ ເທດພາຍໃນ ຍັງໄດ້ຮັບການລົງຕິດຕາມສະໜັບສະໜູນ 9.728 ຄັ້ງຈາກ ວຄ ແລະ ສກມ, ພ້ອມທັງ ມີການສັງເກດ ການສອນໃນຫ້ອງຮຽນເກືອບ 1.699 ຄັ້ງ ທີ່ໄດ້ດຳເນີນຮ່ວມກັນ ໂດຍຜູ້ເຮັດວຽກສຶກສານິເທດພາຍໃນ, ວຄ ແລະ ສກມ. ສິ່ງສຳຄັນແມ່ນ, ຄູ່ຮ່ວມພັດທະນາຫລາຍອົງກອນ ກຳລັງໃຫ້ການສະໜັບສະໜູນ ວິທີການ CPD, ຊຶ່ງເປັນສິ່ງຊີ້ ບອກວ່າ ໄດ້ສົ່ງເສີມໃຫ້ການຂະຫຍາຍລະບົບນີ້ ໄປໃນທົ່ວປະເທດ ໂດຍບໍ່ໄດ້ອີງໃສ່ທຶນຂອງລັດຖະບານອົດສະຕຣາລີ ຢ່າງດຽວ. ຂັ້ນຕອນຕໍ່ໄປ ແມ່ນການປະຕິບັດຕົວຈິງ ແລະ ເນັ້ນໃສ່ການການປະຕິບັດຢ່າງຕໍ່ເນື່ອງ.
ໃນກອງປະຊຸມ ຜູ້ເຂົ້າຮ່ວມຍັງໄດ້ປຶກສາຫາລື ກ່ຽວກັບບຸລິມະສິດໃນການຂະຫຍາຍໄລຍະທີ II, ລວມທັງສ້າງຄວາມເຂັ້ມແຂງ ດ້ານການຄົ້ນຄວ້າ ແລະ ການຮຽນຮູ້ ພ້ອມທັງເອົາໃຈໃສ່ສົ່ງເສີມ ຄວາມສະເໝີພາບ ຍິງ-ຊາຍ ແລະ ຄວາມກ້າວໜ້າຂອງ ແມ່ຍິງ.



ປະເທດລາວ Pathedlao
2h ·

ຍົກລະດັບວິຊາຊີບຄູປະຖົມ ຜ່ານກິດຈະກຳ
ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ... See more



| 2026-04-01 | Education Science and Sport News Facebook |
| --- | --- |

**ຂ່າວສຶກສາ, ວິທະຍາສາດ ແລະ ກິລາ / Education Science And Sport News**
April 1 at 10:57 AM ·

ສສກ ຮ່ວມກັບລັດຖະບານອົດສະຕຣາລີ ແລກປ່ຽນບົດຮຽນການຈັດຕັ້ງປະຕິບັດກິດຈະກຳພັດທະນາວິຊາຊີບຄູແບບຕໍ່ເນື່ອງ
++++++++++++++++++++++++++++++++... **See more**




| 2026-05-21 | Vientiane Radio FM 105.5 Facebook |
| --- | --- |




**ສະຖານີ ວິທະຍຸ ນະຄອນຫຼວງວຽງຈັນ**
March 31 ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມລັດຖະບານອົດສະຕຣາລີ ຍົກລະດັບຄຸນນະພາບຄູ ຜ່ານລະບົບ CPD... **See more**

| 2026-04-03 | Edu-Sport TV Online Facebook and TV |
|---|---|




| 2026-03-31 | Vientiane Mai Facebook |
|---|---|



ວຽງຈັນໃໝ່/VientianeMai
March 31 at 4:40 PM ·

ຍົກລະດັບວິຊາການໃຫ້ຄູ ຜ່ານລະບົບ CPD ສູ່ຄຸນນະພາບການສຶກສາທົ່ວປະເທດ

..................................................

ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບ ລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ຈັດ "ກອງປະຊຸມປະຈຳ 6 ເດືອນ" ຮ່ວມກັບ ວິທະຍາໄລຄູ (ວຄ) ແລະ ພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ລະຫວ່າງວັນທີ 31 ມີນາ – 1 ເມສາ 2026 ທີ່ນະຄອນຫຼວງວຽງຈັນ ໂດຍມີ ທ່ານ ເພັດມະນີ ສີລັດມີນາ ຮອງຫົວໜ້າກົມສ້າງຄູ ກະຊວງ ສສກ ທ່ານ ນາງ ເຣເບັກກາ ແມັກຣິວ ຫົວໜ້າທີມແຜນງານບີຄວາ ຕາງໜ້າສະຖານທູດອົດສະຕຣາລີ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ ໄດ້ເນັ້ນໜັກໃສ່ການພັດທະນາ ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໃນລະດັບໂຮງຮຽນ ໂດຍຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ ຈາກການດຳເນີນງານໃນໄລຍະຜ່ານມາ ພ້ອມກັບການວາງແຜນລະອຽດສຳລັບ 2 ປີເຄິ່ງຂ້າງໜ້າ ໃນການຂະຫຍາຍໄລຍະທີ 2 ຂອງແຜນງານ.

ທ່ານ ເພັດມະນີ ສີລັດມີນາ ໄດ້ກ່າວວ່າ: ລະບົບ CPD ທີ່ຖືກພັດທະນາ ໄດ້ສອດຄ່ອງກັບຄວາມຕ້ອງການຂອງຄູ ໂດຍເນັ້ນໃສ່ການມີສ່ວນຮ່ວມໃນທຸກລະດັບ ພາຍໃຕ້ການນຳພາຂອງກົມສ້າງຄູ ແລະ ການສະໜັບສະໜູນຈາກພາກສ່ວນຕ່າງໆ ລະບົບນີ້ໄດ້ຖືກນຳໃຊ້ໃນ 30 ເມືອງເປົ້າໝາຍ ໃນ 7 ແຂວງ ເພື່ອຊ່ວຍເຫຼືອຄູຢ່າງຕໍ່ເນື່ອງ.

ທ່ານ ນາງ ເຣເບັກກາ ແມັກຣິວ ກ່າວວ່າ: ການພັດທະນາຄູແບບຕໍ່ເນື່ອງ ແມ່ນກຸນແຈສຳຄັນ ໃນການແກ້ໄຂບັນຫາຂາດແຄນຄູ ແລະ ຍົກລະດັບທັກສະການສອນ ລະບົບ CPD ຊ່ວຍໃຫ້ຄູໃນເຂດຫ່າງໄກ ໄດ້ຮັບການນຳພາ ແລະ ຄຳແນະນຳຢ່າງສະໝໍ່າສະເໝີ.

ຜົນການດຳເນີນງານໄດ້ສະທ້ອນໃຫ້ເຫັນຢ່າງຈະແຈ້ງ ໂດຍໃນພາກຮຽນທຳອິດປີ 2025–2026 ໄດ້ມີການຈັດກິດຈະກຳ CPD ກວ່າ 33.609 ຄັ້ງ ສະໜັບສະໜູນຄູປະຖົມ 6.930 ຄົນ ແລະ ມີການຕິດຕາມປະເມີນຜົນຫຼາຍພັນຄັ້ງ ຄູມີຄວາມໝັ້ນໃຈສູງຂຶ້ນ ແລະ ນັກຮຽນກໍມີສ່ວນຮ່ວມໃນການຮຽນຫຼາຍຂຶ້ນ ພ້ອມທັງພັດທະນາດ້ານສັງຄົມ ອາລົມດີຂຶ້ນ ນອກນັ້ນ ກອງປະຊຸມຍັງໄດ້ຫາລືເຖິງທິດທາງຂອງໄລຍະທີ 2 ໂດຍເນັ້ນໃສ່ ການຄົ້ນຄວ້າ ຄວາມສະເໝີພາບຍິງ–ຊາຍ ແລະ ການສ້າງໂອກາດໃຫ້ແມ່ຍິງ ພ້ອມທັງຮັບຮອງແຜນວຽກປີ 2026–2027 ແລະ ແຜນລະອຽດໄລຍະເດືອນເມສາ–ກັນຍາ 2026 ເຊິ່ງໃນຂັ້ນຕໍ່ໄປ ບັນດາ ວຄ ແລະ ສກຂ ຈະນຳໃຊ້ແຜນທີ່ໄດ້ຮັບຮອງ ເພື່ອຂະຫຍາຍການນຳໃຊ້ CPD ໃນໂຮງຮຽນ ໃຫ້ກວ້າງຂວາງຂຶ້ນ ໃນຂະນະທີ່ ສສກ ແລະ ຄູ່ຮ່ວມພັດທະນາ ຈະສືບຕໍ່ປະສານງານ ເພື່ອສ້າງລະບົບທີ່ຍືນຍົງ ແລະ ຄອບຄຸມທົ່ວປະເທດ ການຮ່ວມມືຄັ້ງນີ້ ສະທ້ອນໃຫ້ເຫັນເຖິງ ພະລັງການຮ່ວມແຮງຮ່ວມໃຈ ລະຫວ່າງ ສປປ ລາວ ແລະ ອົດສະຕຣາລີ ໃນການຍົກຄຸນນະພາບການສຶກສາ ແລະ ສ້າງອະນາຄົດທີ່ດີໃຫ້ແກ່ເດັກນ້ອຍລາວ.



| 2026-04-30 | Savannakhet Radio Facebook |
|---|---|



**ວິທະຍຸກະຈາຍສຽງ ແຂວງສະຫວັນນະເຂດ**
1h ·

ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງດ້ານການສະໜັບສະໜູນຄູ ໃນໂຮງຮຽນຜ່ານ
------------... See more

| 2026-04-01 | Edu-Radio Online Facebook |
|---|---|

**ລາຍການວິທະຍຸ ສຶກສາ-ກິລາ ອອນລາຍ Edu-Radio online**
April 1 at 9:45 AM ·

ຍົກລະດັບວິຊາການໃຫ້ຄູ ຜ່ານລະບົບ CPD ສູ່ຄຸນນະພາບການສຶກສາທົ່ວປະເທດ
++++++++++++++++++++... See more



| 2026-03-31 | Economic and Commerce Facebook |
|---|---|

**ຂ່າວເສດຖະກິດ-ການຄ້າ Lao Economic Daily**
March 31 at 5:31PM ·

ສ້າງຄວາມເຂັ້ມແຂງໃຫ້ກັບຄູ ເສີມສ້າງການຈັດຕັ້ງປະຕິບັດໃນໄລຍະສອງປີຕໍ່ໜ້າ
..........................

ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມມືກັບລັດຖະບານອົດສະຕຣາລີ ໂດຍຜ່ານ ແຜນງານບີຄວາ ໄດ້ຈັດ "ກອງປະຊຸມປະຈຳ 6 ເດືອນ ຮ່ວມກັບ ວິທະຍາໄລຄູ (ວຄ), ພະແນກສຶກສາທິການ ແລະ ກິລາ ແຂວງ (ສກຂ) " ທີ່ນະຄອນຫຼວງວຽງຈັນ ໃນວັນທີ 31 ມີນາ ແລະ 1 ເມສາ 2026.

ມີຜູ້ແທນເຂົ້າຮ່ວມຈາກຫຼາຍພາກສ່ວນເຊັ່ນ: ກົມສ້າງຄູ, ກົມສາມັນສຶກສາ, ກົມແຜນການ, ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ສະຖານທູດອົດສະຕຣາລີ, ຄູ່ຮ່ວມພັດທະນາ, ສກຂ, ວຄ ແລະ ທີມງານ ແຜນງານບີຄວາ.

ກອງປະຊຸມຍົກໃຫ້ເຫັນ ກ່ຽວກັບລະບົບ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໃນຂັ້ນໂຮງຮຽນ, ໂດຍຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ ຈາກການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ການກະກຽມແຜນການລະອຽດສຳລັບສອງປີເຄິ່ງໃນຕໍ່ໜ້າ ເມື່ອແຜນງານບີຄວາຂະຫຍາຍເວລາໄລຍະທີ 2.

ທ່ານ ເພັດມະນີ ສີລັດມີນາ, ຮອງຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: ດ້ວຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ, ພວກເຮົາໄດ້ສ້າງຕັ້ງລະບົບ CPD ໃນໂຮງຮຽນ ທີ່ສອດຄ່ອງກັບຄວາມຕ້ອງການຂອງຄູ. ທີມງານຜູ້ເຣັດວຽກສຶກສານິເທດພາຍໃນທີມທຳອິດ ໄດ້ຖືກຄັດເລືອກໃນເດືອນ ມີນາ ປີ 2023 ເພື່ອໃຫ້ຄູໄດ້ຮັບການຊ່ວຍເຫຼືອຢ່າງເປັນປະຈຳ ໂດຍເນັ້ນໂຮງຮຽນ 30 ເມືອງເປົ້າໝາຍໃນ 7 ແຂວງ. ກອງປະຊຸມຄັ້ງນີ້, ໄດ້ເຊີນຄູ່ຮ່ວມງານທັງໝົດເຂົ້າຮ່ວມ ເພື່ອທົບທວນຄືນເຖິງຄວາມຄືບໜ້າ, ແບ່ງປັນບົດຮຽນຈາກພາກຮຽນທີ 1 ຂອງປີຮຽນ 2025-2026 ແລະ ຕົກ ລົງເປັນເອກະພາບກັນກ່ຽວກັບຂັ້ນຕອນ ການປະຕິ ບັດຕົວຈິງ ເພື່ອຂະຫຍາຍ ແລະ ເສີມສ້າງການຈັດຕັ້ງປະຕິບັດໃນໄລຍະສອງປີເຄິ່ງໃນຕໍ່ໜ້າ.

ທ່ານ ນາງ ເຣເບັກກາ ແມັກຣີວ, ຫົວໜ້າທີມ ແຜນງານບີຄວາ ຕາງໜ້າໃຫ້ແກ່ສະຖານທູດອົດສະຕຣາລີ ກ່າວວ່າ: ໃນຂະນະທີ່ປະເຊີນກັບສະພາບການຂາດແຄນຄູ ແລະ ການຫຼຸດລົງຂອງນັກຮຽນເຂົ້າຮຽນໃນບາງຂົງເຂດ, ການສະໜັບສະໜູນດ້ານວິຊາຊີບຢ່າງຕໍ່ເນື່ອງ ແມ່ນກຸນແຈສຳຄັນ ໃນການຍົກລະດັບທັກສະຂອງຄູ ແລະ ປັບປຸງການຮຽນຂອງນັກຮຽນ. ຜ່ານລະບົບ CPD, ກະຊວງ ແລະ ຄູ່ຮ່ວມງານ ກຳລັງສະໜັບສະໜູນຄູຫຼາຍພັນຄົນ ໃນເຂດທີ່ດ້ອຍໂອກາດ ໂດຍການເຂົ້າເຖິງຄຳແນະນຳໄດ້ຢ່າງເປັນປະຈຳ, ການລົງຕິດຕາມໂຮງຮຽນ, ການຮ່ວມໂມງສອນ, ຮັບຟັງການຖອດຖອນບົດຮຽນ ແລະ ການຊີ້ນຳຕິດຕາມ.

ຜູ້ເຂົ້າຮ່ວມຍັງໄດ້ປຶກສາຫາລື ກ່ຽວກັບບູລິມະສິດໃນການຂະຫຍາຍໄລຍະທີ 2, ລວມທັງສ້າງຄວາມເຂັ້ມແຂງດ້ານການຄົ້ນຄວ້າ ແລະ ການຮຽນຮູ້ ພ້ອມທັງເອົາໃຈໃສ່ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ. ແຜນວຽກປະຈຳປີຂອງ ສກຂ ແລະ ວຄ ສຳລັບປີ 2026–2027 ແມ່ນໄດ້ຮັບການຮັບຮອງ ແລະ ແຜນການລະອຽດສຳລັບເດືອນເມສາ ຫາ ເດືອນກັນຍາ 2026 ກໍໄດ້ຮັບການອະນຸມັດຂັ້ນສຸດທ້າຍ.




| 2026-04-29 | The Information and Media Center Facebook |
|---|---|

**ສູນໂຄສະນາຂ່າວສານ ການສຶກສາ ແລະ ກິລາ**
April 29 ·

https://www.facebook.com/share/p/16dzzHJo8d/?mibextid=wwXIfr



**ລາຍການວິທະຍຸ ສຶກສາ-ກິລາ ອອນລາຍ Edu-Radio online**
April 1 ·

ຍົກລະດັບວິຊາການໃຫ້ຄູ ຜ່ານລະບົບ CPD ສູ່ຄຸນນະພາບການສຶກສາທົ່ວປະເທດ

| 2026-04-01 | Lao Security News Facebook |
|---|---|

**ຄວາມສະຫງົບ Lao Security News**
April 1 at 6:44 PM ·

ສສກ ຮ່ວມກັບລັດຖະບານອົດສະຕຣາລີ ສ້າງຄວາມເຂັ້ມແຂງຄູໃນໂຮງຮຽນຜ່ານການວາງແຜນຮ່ວມກັນ ... See more



**ຂ່າວ Laos News - KPL**
April 1 at 11:48 AM ·

MoES and Australia strengthen school-based teacher support through joint planning

(KPL) The Ministry of Education and Sports (MoES), in collaboration with the Australian Government through the BEQUAL programme, hosted the TTC–PESS bi-annual meeting in Vientiane on 31 March and 1 April.
A total of 86 delegates attended, including representatives from the Department of Teacher Education (DTE), Department of General Education (DGE), Department of Planning (DOP), MoES Division for the Advancement of Women, Mothers and Children (MDAW), the Australian Embassy, development partners, Provincial Education and Sports Services (PESS), Teacher Training Colleges (TTCs), and the BEQUAL team.



KPL.GOV.LA

**MoES and Australia strengthen school-based teacher support through joint planning**

| 2026-04-01 | Paxason Facebook |
|---|---|



ປະຊາຊົນ
April 1 at 3:45 PM

ຍົກລະດັບວິຊາການໃຫ້ຄູ ຜ່ານລະບົບ CPD ສູ່ຄຸນນະພາບ
..............
ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົສຕຣາລີ ຜ່ານແຜນງານບີຄວາ ຈັດກອງປະຊຸມປະຈຳ 6 ເດືອນ ຮ່ວມກັບ ວິທະຍາໄລຄູ (ວຄ) ແລະ ພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ໃນລະຫວ່າງວັນທີ 31 ມີນາ ຫາ ວັນທີ 1 ເມສາ 2026 ທີ່ນະຄອນຫຼວງວຽງຈັນ ໂດຍມີ ທ່ານ ເພັດມະນີ ສີລັດມີນາ ຮອງຫົວໜ້າກົມສ້າງຄູ ກະຊວງ ສສກ, ມີ ທ່ານ ນາງ ເຣເບັກກ້າ ແມັກຣີອ ຫົວໜ້າທີມແຜນງານບີຄວາ ຕາງໜ້າສະຖານທູດອົສຕຣາລີ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.
ກອງປະຊຸມຄັ້ງນີ້, ໄດ້ເນັ້ນໜັກໃສ່ການພັດທະນາລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໃນລະດັບໂຮງຮຽນ ໂດຍຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ ຈາກການດຳເນີນງານໃນໄລຍະຜ່ານມາ ພ້ອມກັບການວາງແຜນລະອຽດສຳລັບ 2 ປີ ເຄິ່ງຂ້າງໜ້າ ໃນການຂະຫຍາຍໄລຍະທີ 2 ຂອງແຜນງານ.
ທ່ານ ເພັດມະນີ ສີລັດມີນາ ໄດ້ກ່າວວ່າ: ລະບົບ CPD ທີ່ຖືກພັດທະນາ ໄດ້ສອດຄ່ອງກັບຄວາມຕ້ອງການຂອງຄູ ໂດຍເນັ້ນໃສ່ການມີສ່ວນຮ່ວມໃນທຸກລະດັບ ພາຍໃຕ້ການນຳພາຂອງກົມສ້າງຄູ ແລະ ການສະໜັບສະໜູນຈາກພາກສ່ວນຕ່າງໆ ລະບົບນີ້ໄດ້ຖືກນຳໃຊ້ໃນ 30 ເມືອງເປົ້າໝາຍ ໃນ 7 ແຂວງ ເພື່ອຊ່ວຍເຫຼືອຄູຢ່າງຕໍ່ເນື່ອງ.
ທ່ານ ນາງ ເຣເບັກກ້າ ແມັກຣີອ ກ່າວວ່າ: ການພັດທະນາຄູແບບຕໍ່ເນື່ອງ ແມ່ນກຸນແຈສຳຄັນໃນການແກ້ໄຂບັນຫາຂາດແຄນຄູ ແລະ ຍົກລະດັບທັກສະການສອນລະບົບ CPD ຊ່ວຍໃຫ້ຄູໃນເຂດຫ່າງໄກ ໄດ້ຮັບການນຳພາ ແລະ ຄຳແນະນຳຢ່າງສະໝໍ່າສະເໝີ.
ຜົນການດຳເນີນງານໄດ້ສະທ້ອນໃຫ້ເຫັນຢ່າງຈັດເຈນ ໂດຍໃນພາກຮຽນທຳອິດປີ 2025–2026 ໄດ້ມີການຈັດກິດຈະກຳ CPD ກວ່າ 33,609 ຄັ້ງ, ສະໜັບສະໜູນຄູປະຖົມ 6,930 ຄົນ ແລະ ມີການຕິດຕາມປະເມີນຜົນຫຼາຍພັນຄັ້ງ ຄູມີຄວາມໝັ້ນໃຈສູງຂຶ້ນ ແລະ ນັກຮຽນ ກໍມີສ່ວນຮ່ວມໃນການຮຽນຫຼາຍຂຶ້ນ ພ້ອມທັງພັດທະນາດ້ານສັງຄົມ ອາລົມດີຂຶ້ນ. ນອກນັ້ນ, ກອງປະຊຸມຍັງໄດ້ຫາລືເຖິງທິດທາງຂອງໄລຍະທີ 2 ໂດຍເນັ້ນໃສ່ການຄົ້ນຄວ້າ ຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງໂອກາດໃຫ້ແມ່ຍິງ ພ້ອມທັງຮັບຮອງແຜນວຽກປີ 2026–2027 ແລະ ແຜນລະອຽດໄລຍະເດືອນເມສາ ຫາກັນຍາ 2026 ຊຶ່ງໃນຂັ້ນຕໍ່ໄປບັນດາ ວຄ ແລະ ສກຂ ຈະນຳໃຊ້ແຜນທີ່ໄດ້ຮັບຮອງ ເພື່ອຂະຫຍາຍການນຳໃຊ້ CPD ໃນໂຮງຮຽນໃຫ້ກວ້າງຂວາງຂຶ້ນ. ໃນຂະນະທີ່ ສສກ ແລະ ຄູ່ຮ່ວມພັດທະນາ ຈະສືບຕໍ່ປະສານງານ ເພື່ອສ້າງລະບົບທີ່ຍືນຍົງ ແລະ ຄອບຄຸມທົ່ວປະເທດ.
ການຮ່ວມມືຄັ້ງນີ້, ສະທ້ອນໃຫ້ເຫັນເຖິງພະລັງການຮ່ວມແຮງຮ່ວມໃຈ ລະຫວ່າງ ສປປ ລາວ ແລະ ອົສຕຣາລີ ໃນການຍົກຄຸນນະພາບການສຶກສາ ແລະ ສ້າງອະນາຄົດທີ່ດີໃຫ້ເດັກນ້ອຍລາວ.
ຂ່າວ: ແຜນງານບີຄວາ

| 2026-04-01 | PESS VTE Province Facebook |
|---|---|



ພະແນກສຶກສາທິການ ແລະ ກິລາແຂວງວຽງຈັນ
April 3 at 11:18 AM

ສ້າງຄວາມເຂັ້ມແຂງດ້ານການສະໜັບສະໜູນຄູໃນໂຮງຮຽນຜ່ານການວາງແຜນຮ່ວມກັນ ແລະ ການຮຽນຮູ້ຜ່ານຂໍ້ມູນທີ່ເກັບກຳໄດ້
--------------------------------------------------------------------... See more

| 2026-04-01 | Lao PS TV Facebook and TV |
|---|---|

ໂທລະພາບປ້ອງກັນຄວາມສະຫງົບ - laopstv
April 2 at 4:25 PM ·

#ໂທລະພາບ ປກສ LaoPSTV News: ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບລັດຖະບານອົສຕຣາລີ ຜ່ານແຜນງານ ບີຄວາ ຈັດກອງປະຊຸມປະຈຳ 6 ເດືອນ ຮ່ວມກັບ ວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ... See more




| 2026-04-01 | Lao National TV YouTube |
|---|---|




ກຊ ປະຈຳ 6 ເດືອນ ຮ່ວມກັບວິທະຍາໄລຄູພະແນກ ສສກ ແຂວງ[01-04-26]

LAO NATIONAL TELEVISION
5.29K subscribers
Subscribe
0 Share Save Download

| 2026-04-01 | Lao Army Radio Facebook |
| --- | --- |




| 2026-04-27 | Xiengkhuang Mixay Newspaper Facebook |
| --- | --- |



| | |
|---|---|
| 2026-05-21 | **Xiengkhuang Mixay Newspaper Facebook and TV** |




| | |
|---|---|
| 2026-05-22 | **Khangkhay TTC Facebook** |




| | |
|---|---|
| 2026-04-03 | **BEQUAL Website** |

| 2026-06-23 | educationnews.la/ |
|---|---|

ສຶກສາ, ວິທະຍາສາດ ແລະ ກິລາ

Education, Science and Sports Daily News

ການເມືອງ | ສຶກສາ | ວິທະຍາສາດ | ກິລາ | ຂ່າວທ້ອງຖິ່ນ | ເສດຖະກິດ-ສັງຄົມ | ໜັງສືພິມ

# ສສກ ແລະ ອົດສະຕຣາລີ ຈັບມືຍົກລະດັບວິຊາຊີບຄູປະຖົມ ຜ່ານກິດຈະກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນ 30 ເມືອງເປົ້າໝາຍ

23/06/2026




ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມມືກັບ ລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ (BEQUAL) ຈັດກອງປະຊຸມປະຈໍາ 6 ເດືອນ ຮ່ວມກັບວິທະຍາໄລຄູ (ວຄ) ແລະ ພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດກິດຈະກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ໃນຂັ້ນໂຮງຮຽນ ແລະ ວາງແຜນການເຄື່ອນໄຫວໃນຕໍ່ໜ້າ.

ພື້ນທີ່ໂຄສະນາ 300px x 250px
ໂທ:021 213161, 030 2800600

ຂ່າວທີ່ກ່ຽວຂ້ອງ

- ສສກ ແລະ ອົດສະຕຣາລີ ຈັບມືຍົກລະດັບວິຊາຊີບຄູປະຖົມ ຜ່ານກິດຈະກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນ 30 ເມືອງເປົ້າໝາຍ
- ສື່ການຮຽນການສອນຝຶກເວົ້າພາສາລາວ ໄດ້ຊ່ວຍໃຫ້ນັກຮຽນໄດ້ຮຽນຮູ້ ແລະ ມີສ່ວນຮ່ວມໃນການຮຽນໃນຫ້ອງຮຽນຫຼາຍຂຶ້ນ
- ປອກຕຸຍການ ຟອມຟິດ ປະເດີມສະໜາມບານໂລກ 2026 ເຮັດໄດ້ພຽງສະເໝີ ຄອງໂກ 1-1
- "ແຮຣີ ເຄນ" ເໝົາສອງປະຕູ ພາ ອັງກິດ ໄລ່ຕ້ອນ ໂຄຣເອເຊຍ 4-2 ຄວ້າ 3 ແຕ້ມທໍາອິດ ປະເດີມບານໂລກ 2026
- ກຽມເປີດແຂ່ງຂັນກິລາລົດຖີບ ຊີງແຊ່ມປະເທດລາວ ປະຈໍາປີ 2026 ທ້າຍເດືອນມິຖຸນານີ້

| 2026-04-03 | moes.du.la Website |
|---|---|

ໜ້າຫຼັກ | ກ່ຽວກັບກະຊວງ | ຕູ້ຫຸດ | ໂຄງການຮ່ວມມື | ທຶນການສຶກສາ | ສະຖິຕິການສຶກສາ | ການເຄື່ອນໄຫວ | ເຊື່ອມຕໍ່ເວບໄຊ

ຂ່າວການເຄື່ອນໄຫວ / 03 April 2026 / Hits: 139

**ສສກ ຮ່ວມກັບລັດຖະບານອົດສະຕຣາລີ ແລກປ່ຽນບົດຮຽນການຈັດຕັ້ງປະຕິບັດກິດຈະກໍາພັດທະນາວິຊາຊີບຄູແບບຕໍ່ເນື່ອງ**

ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມມືກັບລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ໄດ້ຈັດກອງປະຊຸມປະຈໍາ 6 ເດືອນ ຮ່ວມກັບ ວິທະຍາໄລຄູ, ພະແນກສຶກສາທິການ ແລະ ກິລາ ແຂວງ" ເມື່ອວັນທີ 31 ມີນາ 2026 ທີ່ຫ້ອງປະຊຸມໂຮງແຮມດັບໂບທຣີ, ໂດຍການເປັນປະທານຂອງທ່ານ ເພັດມະນີ ສີລັດມີນາ ຮອງຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ, ມີຜູ້ແທນຈາກຫຼາຍພາກສ່ວນເຊັ່ນ: ກົມສ້າງຄູ, ກົມສາມັນສຶກສາ, ກົມແຜນການ, ພະແນກຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ສະຖານທູດອົດສະຕຣາລີ, ຄູ່ຮ່ວມພັດທະນາ, ສກຂ, ວຄ ແລະ ທີມງານ ແຜນງານບີຄວາ.
ໂອກາດນີ້, ທ່ານ ເພັດມະນີ ສີລັດມີນາ ໄດ້ກ່າວວ່າ: "ດ້ວຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ສ້າງຕັ້ງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນໂຮງຮຽນທີ່ສອດຄ່ອງກັບຄວາມຕ້ອງການຂອງຄູ, ມີລະບົບທີ່ດີ, ມີຄວາມຍືດຫຍຸ່ນ ແລະ ມີການມີສ່ວນຮ່ວມໃນທຸກລະດັບ. ທີມງານຜູ້ເຮັດວຽກສຶກສານິເທດພາຍໃນ ທີມທໍາອິດ ໄດ້ຖືກຄັດເລືອກໃນເດືອນມີນາ ປີ 2023 ເພື່ອໃຫ້ຄູໄດ້ຮັບການຊ່ວຍເຫຼືອຢ່າງເປັນປະຈໍາ ໂດຍເນັ້ນໂຮງຮຽນໃນ 30 ເມືອງເປົ້າໝາຍໃນ 7 ແຂວງ. ພາຍໃຕ້ການນໍາພາຂອງ ກົມສ້າງຄູ, ບັນດາວິທະຍາໄລຄູ ໄດ້ອໍານວຍຄວາມສະດວກໃນການສ້າງຂີດຄວາມສາມາດ, ໃນຂະນະທີ່ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ໄດ້ນໍາພາການປະເມີນຄວາມຕ້ອງການ ແລະ ການຕິດຕາມກວດກາ. ກອງປະຊຸມຄັ້ງນີ້, ໄດ້ເຊີນຄູ່ຮ່ວມງານທັງໝົດເຂົ້າຮ່ວມ ເພື່ອທົບທວນຄືນເຖິງຄວາມຄືບໜ້າ, ແບ່ງປັນບົດຮຽນຈາກພາກຮຽນທີ 1 ຂອງປີຮຽນ 2025-2026, ແລະ ຕົກລົງເປັນເອກະພາບກັນກ່ຽວກັບຂັ້ນຕອນ ການປະຕິບັດຕົວຈິງ ເພື່ອຂະຫຍາຍ ແລະ ເສີມສ້າງການຈັດຕັ້ງປະຕິບັດໃນໄລຍະສອງປີເຄິ່ງໃນຕໍ່ໜ້າ."
ສໍາລັບລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃໝ່ຂອງ ສສກ ໄດ້ຊ່ວຍສົ່ງເສີມການຮຽນຮູ້ຂອງຄູ ໃຫ້ເປັນມືອາຊີບຄື: ໃນພາກຮຽນທໍາອິດຂອງປີ 2025-2026, ໃນ 30 ເມືອງເປົ້າໝາຍຂອງແຜນງານບີຄວາ, ທີມງານຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ອໍານວຍຄວາມສະດວກໃຫ້ແກ່ກິດຈະກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຈໍານວນ 33,609 ຄັ້ງ ແລະ ໄດ້ສະໜັບສະໜູນຄູສອນຊັ້ນປະຖົມ ຈໍານວນ 6,930 ຄົນ (56% ເປັນເພດຍິງ); ຜູ້ເຮັດວຽກສຶກສານິເທດພາຍໃນ ຍັງໄດ້ຮັບການລົງຕິດຕາມສະໜັບສະໜູນ 9,728 ຄັ້ງຈາກ ວຄ ແລະ ສກມ, ແລະ ມີການສັງເກດການສອນໃນຫ້ອງຮຽນເກືອບ 1,699 ຄັ້ງ ທີ່ໄດ້ດໍາເນີນຮ່ວມກັນໂດຍ ຜູ້ເຮັດວຽກສຶກສານິເທດພາຍໃນ, ວຄ ແລະ ສກມ. ສິ່ງສໍາຄັນແມ່ນ, ຄູ່ຮ່ວມພັດທະນາຫຼາຍອົງກອນ ກໍາລັງໃຫ້ການສະໜັບສະໜູນວິທີການ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ເຊິ່ງເປັນສິ່ງຊີ້ບອກວ່າ ໄດ້ສົ່ງເສີມໃຫ້ການຂະຫຍາຍລະບົບນີ້ ໄປໃນທົ່ວປະເທດ ໂດຍບໍ່ໄດ້ອີງໃສ່ທຶນຂອງລັດຖະບານອົດສະຕຣາລີຢ່າງດຽວ.
ກອງປະຊຸມຍົກໃຫ້ເຫັນ ກ່ຽວກັບລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນຂັ້ນໂຮງຮຽນ, ໂດຍຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ ຈາກການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ການກະກຽມແຜນການລະອຽດສໍາລັບສອງປີເຄິ່ງໃນຕໍ່ໜ້າ ເມື່ອແຜນງານບີຄວາຂະຫຍາຍເວລາໄລຍະທີ 2. ນອກຈາກນີ້, ຜູ້ເຂົ້າຮ່ວມຍັງໄດ້ປຶກສາຫາລື ກ່ຽວກັບບູລິມະສິດໃນການຂະຫຍາຍໄລຍະທີ 2, ລວມທັງສ້າງຄວາມເຂັ້ມແຂງດ້ານການຄົ້ນຄວ້າ ແລະ ການຮຽນຮູ້ ພ້ອມທັງເອົາໃຈໃສ່ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ. ແຜນວຽກປະຈໍາປີຂອງພະແນກສຶກສາທິການ ແລະ ກິລາແຂວງ ແລະ ວິທະຍາໄລຄູ ສໍາລັບປີ 2026–2027 ແມ່ນໄດ້ຮັບການຮັບຮອງ ແລະ ແຜນການລະອຽດສໍາລັບເດືອນເມສາ ຫາ ເດືອນກັນຍາ 2026 ກໍ່ໄດ້ຮັບການອະນຸມັດຂັ້ນສຸດທ້າຍ.





| 2026-04-01 | KPL English Website |
|---|---|

LAO NEWS AGEN

POLITICS | NEWS | NEWSPAPER | OTHERS LINK | ABOUT US | CONTACT US

ໜ້າທຳອິດ > EDUCATION

# MoES and Australia strengthen school-based teacher support through joint planning

01/04/2026 11:44 Email | Print | 19

**KPL The Ministry of Education and Sports (MoES), in collaboration with the Australian Governmen through the BEQUAL programme, hosted the TTC–PESS bi-annual meeting in Vientiane on 31 March a April.**



A total of 86 delegates attended, including representatives from the Department of Teacher Educ (DTE), Department of General Education (DGE), Department of Planning (DOP), MoES Divisic the Advancement of Women, Mothers and Children (MDAW), the Australian Embassy, develop partners, Provincial Education and Sports Services (PESS), Teacher Training Colleges (TTCs), an BEQUAL team.



The meeting focused on the school-based Continuing Professional Development (CPD) system, with participants sharing lessons from recent implementation and preparing detailed plans for the next two and a half years as BEQUAL moves into its Phase 2 extension.

Mr Phetmany Silathmina, Deputy Director General of DTE, remarked at the opening of the workshop: "With the support of the Australian Government, we have established a school-based CPD system that is relevant to teachers' needs, systematic, flexible and inclusive of stakeholders at all levels. The first Internal Pedagogical Support (IPS) teams were selected in March 2023 to provide teachers with regular, classroom-focused support across 30 target districts in seven provinces. Under the leadership of DTE, TTCs have provided capacity building, while DESBs lead on needs assessment and monitoring. This meeting brings all partners together to review progress, share lessons from semester one of the 2025–26 school year, and agree practical steps to scale up and strengthen implementation over the next two and a half years."

